**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ເລກທີ.......1662......./ຫອຄ
ນະຄອນຫຼວງວຽງຈັນ, ວັນທີ ...05...ກໍລະກົດ 2024

## <u>ແຈ້ງການ</u>

ເຖິງ: - ທ່ານ ຫົວໜ້າກົມ ທະບຽນວິສາຫະກິດ, ກະຊວງ ອຸດສາຫະກຳ ແລະ ການຄ້າ
- ທ່ານ ປະທານ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ
- ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງໃນການດຳເນີນທຸລະກິດນຳເຂົ້າ-ສົ່ງອອກພາຫະນະ ໃນຂອບເຂດທົ່ວໄປເທດ.

- ອີງຕາມທິດຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ຄັ້ງວັນທີ 25/6/2024;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຫ້ອງການກະຊວງ ອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2072/ອຄ, ລົງວັນທີ ລົງວັນທີ 15/11/2023;
- ອີງຕາມ ບົດລາຍງານຂອງທ່ານ ລັດຖະມົນຕີ ກະຊວງ ອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1151/ອຄ, ລົງວັນທີ 28/6/2024.

ເພື່ອເຮັດໃຫ້ວຽກງານການຄຸ້ມຄອງການອອກໃບອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກພາຫະນະ ມີປະສິດທິຜົນສູງຂຶ້ນ ແລະ ເພື່ອເປັນການສະຫຼຸບຕີລາຄາຄືນການຈັດຕັ້ງປະຕິບັດ ພ້ອມທັງດັດສົມຫົວໜ່ວຍທຸລະກິດທີ່ດຳເນີນກິດຈະການດັ່ງກ່າວ ໃຫ້ແທດເໝາະກັບສະພາບຕົວຈິງ, ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງຂໍແຈ້ງມາຍັງບັນດາທ່ານ ຊາບວ່າ ນັບແຕ່ວັນທີ **09 ກໍລະກົດ ເຖິງວັນທີ 31 ທັນວາ 2024** ກະຊວງ ຈະໄດ້ດຳເນີນການໂຈະຮັບເອກະສານສະເໜີຂໍດຳເນີນທຸລະກິດນຳເຂົ້າ-ສົ່ງອອກຍານພາຫະນະ ດ້ວຍເຫດຜົນທີ່ກ່າວມາຂ້າງເທິງ ແລະ ຈະເລີ່ມຮັບເອກະສານສະເໜີຄືນໃໝ່ ນັບແຕ່ວັນທີ **01 ມັງກອນ 2025** ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າຫ້ອງການ**

ປອ. ບົວວັນ ວິລະວົງ

ສອບຖາມຂໍ້ມູນເພີ່ມເຕີມ: ກົມການຄ້າຕ່າງປະເທດ, ກະຊວງ ອຸດສາຫະກຳ ແລະ ການຄ້າ
Tel: 021 452452, 020 91919280